# ຫົວຂໍ້ວິໄຈ: ການນຳໃຊ້ຮູບແບບການຮຽນຮ່ວມກັນ ໃນການຮຽນ-ການສອນ ວິຊາພາສາລາວ ສຳລັບ ນັກຮຽນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ

**Reserch Title : Using Learning together in Teaching and Learning Lao Language for Grade 5 at Primary Demonstration School at Savannakhet Teacher Training College**

**ຜູ້ວິໄຈ: ສົມດີ ຕົມາລາ**

## ບົດຄັດຫຍໍ້

ການຄົ້ນຄ້ວາຄັ້ງນີ້ໄດ້ສຶກສາກ່ຽວກັບການຈັດການຮຽນ- ການສອນວິຊາພາສາລາວ ໂດຍການນຳໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together), ຊັ້ນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ. ຈຸດປະສົງຂອງການສຶກສາ: 1) ເພື່ອຫາປະສິດທິພາບຂອງບົດສອນ ວິຊາ ພາສາລາວ ໂດຍນຳໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ຕາມເກນ E1/E2 = 80/80. 2) ເພື່ອຫາດັດຊະນີປະສິດທິຜົນທາງການຮຽນຮູ້ຂອງນັກຮຽນຊັ້ນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດເນັ້ນໃສ່ການຈັດການຮຽນ-ການສອນໂດຍນຳໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together), ກຸ່ມເປົ້າໝາຍທີ່ໃຊ້ໃນການຄົ້ນຄວ້າຄັ້ງນີ້ໄດ້ແກ່ນັກຮຽນປະຖົມປີທີ 5 ຈຳນວນ 35 ຄົນທີ່ໄດ້ມາຈາກການສຸ່ມແບບເຈາະຈົງ. 3) ເພື່ອສຶກສາທັດສະນະຄະຕິຂອງນັກຮຽນໂດຍໃຊ້ແບບສອບຖາມທັດສະນະຄະຕິ ຈຳນວນ 1 ສະບັບ, ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນໄດ້ແກ່ການຊອກຫາຄວາມຖີ່, ຜົນທີ່ໄດ້ຮັບແມ່ນຄິດໄລ່ເປັນເປີເຊັນ.ຜົນການຄົ້ນຄ້ວາພົບວ່າ: 1)ນັກສຶກສາທີ່ໄດ້ຮັບການຮຽນ-ການສອນໂດຍໃຊ້ຮູບແບບການຮຽນ - ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ວິຊາ ພາສາລາວ ຊັ້ນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ ມີປະສິດທິພາບສູງກວ່າເກນທີ່ຕັ້ງໄວ້ເທົ່າກັບ 87.90/88.95 ເຊິ່ງເປັນໄປຕາມເກນມາດຕະຖານ 80/80 ທີ່ກຳນົດໄວ້. 2) ປະສິດທິຜົນ EI ເທົ່າ 0.8226 ຫຼື ເທົ່າກັບ 82.26 ການຮຽນຮູ້ຂອງນັກຮຽນມີການພັດທະນາເພີ່ມຂຶ້ນ 82.26. 3) ນັກສຶກສາມີທັດສະນະຄະຕິຕໍ່ການຮຽນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ເຂົ້າໃນການຮຽນ - ການສອນວິຊາພາສາລາວ ຂອງນັກຮຽນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ ພົບວ່າ: ມີທັດສະນະຄະຕິຢູ່ໃນລະດັບເຫັນດີໂດຍຄິດເປັນເປີເຊັນເທົ່າກັບ 94.72%.

**ຄຳສັບສຳຄັນ: ຮູບແບບ, ການຮຽນຮູ້ຮ່ວມກັນ, ວິຊາພາສາລາວຊັ້ນປະຖົມສຶກສາປີທີ 5**

## 1. ພາກສະເໜີ

### 1.1 ຄວາມສຳຄັນຂອງບັນຫາ

ມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກປະຊາຊົນປະຕິວັດລາວໄດ້ກຳນົດຢ່າງຈະແຈ້ງວ່າ ການສຶກສາຂອງລາວຕ້ອງຖືເອົາການພັດທະນາຊັບພະຍາກອນມະນຸດເປັນປັດໄຈຕົ້ນຕໍ ເພື່ອຍົກລະດັບກຳລັງການຜະລິດ ແລະ ການສ້າງເສດຖະກິດພູມປັນຍາ, ໃນນັ້ນຖືຄົນເປັນເປົ້າໝາຍ ແລະ ຈຸດສຸມຂອງການພັດທະນາ; ສືບຕໍ່ສຸມໃສ່ເສີມຂະຫຍາຍຜົນສຳເລັດຂອງການປະຕິຮູບການສຶກສາ ກໍຄືການພັດທະນາຊັບພະຍາກອນມະນຸດຕາມ 3 ລັກສະນະ ແລະ 5 ຫຼັກມູນຂອງການສຶກສາແຫ່ງຊາດໃຫ້ມີຄຸນນະພາບຕາມມາດຕະຖານຂອງພາກພື້ນ, ສາກົນ ແລະ ທັນສະໄໝ; ສືບຕໍ່ສ້າງຄົນລາວໃຫ້ເປັນພົນລະເມືອງດີ, ມີຄວາມຮັບຜິດຊອບຕໍ່ສັງຄົມ, ຕໍ່ພັນທະພົນລະເມືອງ, ເຄົາລົບກົດໝາຍ, ຮັກຄວາມຖືກຕ້ອງພ້ອມກັນນັ້ນ ກໍເດັດດ່ຽວຕ້ານອັນຫຍໍ້ທໍ້, ຫຼູ້ຫຼັ່ງ ແລະ ທັດສະນະຜິດເຂວຕ່າງໆ, ການເສື່ອມຖອຍດ້ານ

ຄຸນສົມບັດ; ມີລະດັບການສຶກສາ, ມີຄວາມຮູ້ດ້ານອາຊີບ ແລະ ສີມືການອອກແຮງງານເພີ່ມຂຶ້ນ, ມີຄວາມສາມາດປະດິດສ້າງ ແລະ ນໍາໃຊ້ວິທະຍາສາດ-ເຕັກໂນໂລຊີທີ່ທັນສະໄໝໂດຍສະເພາະແມ່ນການພັດທະນາລະບົບເຕັກໂນໂລຊີ ແລະ ການສື່ສານ (ICT); ມີພະລານາໄມສົມບູນ ແລະ ມີຄວາມສີວິໄລທາງດ້ານຈິດໃຈ ເພື່ອພັດທະນາປະເທດຊາດໃຫ້ສາມາດເຊື່ອມໂຍງເຂົ້າກັບພາກພື້ນ ແລະ ສາກົນ (ສະພາແຫ່ງຊາດ, 2016).

ການສຶກສາມີບົດບາດສໍາຄັນ ແລະ ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ດັ່ງທ່ານໄກສອນ ພົມວິຫານໄດ້ກ່າວວ່າ: “ ການສຶກສາມີຄຸນປະໂຫຍດອັນຕັ້ງໜ້າຕໍ່ດ້ານຕ່າງໆຂອງການດໍາລົງຊີວິດສັງຄົມ ແລະ ການເປັນປັດໄຈສໍາຄັນກວ່າໝູ່ຕໍ່ຂະບວນວິວັດແຫ່ງການຂະຫຍາຍຕົວເສດຖະກິດແຫ່ງຊາດ. ຍ້ອນແນວນັ້ນ ຫຼາຍປະເທດເມື່ອວາງແຜນການພັດທະນາເສດຖະກິດສັງຄົມ ເຂົາເຈົ້າຈຶ່ງວາງແຜນການພັດທະນາການສຶກສາໄປພ້ອມໆກັນ ແລະ ເຂົ້າເຈົ້າກໍ່ໄດ້ເພີ່ມທະວີຕໍ່ການລົງທຶນໃສ່ການສຶກສາ ເຊິ່ງເອີ້ນວ່າລົງທຶນລ່ວງໜ້າໃຫ້ເສດຖະກິດ ” (ກະຊວງສຶກສາທິການ ແລະ ກິລາ, 2013:61).

**1.2 ສະພາບປັດຈຸບັນຂອງບັນຫາ**

ການສຶກສາມີບົດບາດສໍາຄັນ ແລະ ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ດັ່ງທ່ານໄກສອນ ພົມວິຫານໄດ້ກ່າວວ່າ: “ ການສຶກສາມີຄຸນປະໂຫຍດອັນຕັ້ງໜ້າຕໍ່ດ້ານຕ່າງໆຂອງການດໍາລົງຊີວິດສັງຄົມ ແລະ ການເປັນປັດໄຈສໍາຄັນກວ່າໝູ່ຕໍ່ຂະບວນວິວັດແຫ່ງການຂະຫຍາຍຕົວເສດຖະກິດແຫ່ງຊາດ. ຍ້ອນແນວນັ້ນ ຫຼາຍປະເທດເມື່ອວາງແຜນການພັດທະນາເສດຖະກິດສັງຄົມ ເຂົາເຈົ້າຈຶ່ງວາງແຜນການພັດທະນາການສຶກສາໄປພ້ອມໆກັນ ແລະ ເຂົ້າເຈົ້າກໍ່ໄດ້ເພີ່ມທະວີຕໍ່ການລົງທຶນໃສ່ການສຶກສາ ເຊິ່ງເອີ້ນວ່າລົງທຶນລ່ວງໜ້າໃຫ້ເສດຖະກິດ ” (ກະຊວງສຶກສາທິການ ແລະ ກິລາ, 2013:61).

ການຮຽນ-ການສອນລະບົບສາມັນສຶກສາ ແມ່ນການສອນຄວາມຮູ້ພື້ນຖານທົ່ວໄປ ຊຶ່ງປະກອບດ້ວຍ ປະຖົມສຶກສາ, ມັດທະຍົມສຶກສາຕອນຕົ້ນ, ມັດທະຍົມສຶກສາຕອນປາຍ ແລະ ໃຊ້ເວລາຮຽນທັງໝົດ 12 ປີ ໂດຍມີຈຸດໝາຍດັ່ງນີ້: ການຮຽນ-ການສອນຊັ້ນປະຖົມສຶກສາ ແມ່ນຮັບປະກັນໃຫ້ຜູ້ຮຽນ ມີຄວາມຮູ້ທົ່ວໄປ ແລະ ມີຄວາມສາມາດໃນການຟັງ, ການອ່ານ, ການຂຽນ, ການເວົ້າ, ການເບິ່ງ, ການຖາມ, ການຄິດໄລ່, ການສຸຂະອະນາໄມ, ກິລາ-ກາຍະກໍາ ແລະ ການເຝິກແອບສິລະປະຂັ້ນພື້ນຖານດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ (ກະຊວງສຶກສາທິການ ແລະ ກິລາ, 2016:8).

**1.3 ສະພາບທີ່ເປັນບັນຫາ**

ຈາກປະສົບການຂອງຜູ້ຄົ້ນຄວ້າກ່ຽວກັບການຈັດກິດຈະກໍາການຮຽນ-ການສອນ ແລະ ປະສົບການທີ່ເຄີຍລົງສອນຊ່ວຍທີ່ຜ່ານມາ ຜູ້ຄົ້ນຄວ້າສັງເກດເຫັນວ່າ ການຮຽນ-ການສອນແບບກຸ່ມຮ່ວມມື ຜ່ານມາເນັ້ນພຽງແຕ່ເພື່ອໃຫ້ນັກຮຽນມີຄວາມຮູ້, ຄວາມເຂົ້າໃຈ ສະເພາະບັນຫາບາງຢ່າງ, ອະທິບາຍ ແລະ ຊອກຫາຄໍາຕອບໃຫ້ນັກຮຽນເທົ່ານັ້ນ ໂດຍບໍ່ໄດ້ເນັ້ນເນື້ອໃນການຄົ້ນຄິດຢ່າງຕັ້ງໜ້າຂອງແຕ່ລະບຸກຄົນນໍາເອົາປະສົບການດ້ານຄວາມຮູ້ຄວາມເຂົ້າໃຈ ແລະ ທັກສະທີ່ເກີດຂຶ້ນໄປນໍາໃຊ້ໃນການຮຽນຮູ້ສິ່ງຕ່າງໆໃນຊີວິດປະຈໍາວັນໃຫ້ມີຄວາມສ້າງສັນ, ການຮູ້ຄູນຄ່າ ແລະ ມີຄວາມຮູ້ສຶກທີ່ດີຕໍ່ສິ່ງແວດລ້ອມແມ່ນຍັງບໍ່ໄດ້ຮັບຄວາມເພິງພໍໃຈເທົ່າທີ່ຄວນ, ນັກສຶກສາຈໍານວນໜຶ່ງບໍ່ກ້າສະແດງຄວາມຄິດຄວາມເຫັນ, ບໍ່ກ້າສະແດງອອກ, ຍັງຂາດການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນການເຮັດກິດຈະກໍາກຸ່ມ, ມີແນວຄິດເອື່ອຍອີງ ແລະ ເມີນເສີຍຕໍ່ການຄົ້ນຄວ້າຮໍ່າຮຽນ ແລະ ການສິດສອນຂອງຄູ ເຊິ່ງເປັນຜົນຕໍ່ການຮຽນຂອງຜູ້ຮຽນບໍ່ມີປະສິດທິພາບ.

**1.4 ສະພາບທີ່ຕ້ອງການພັດທະນາ**

ຜູ້ສຶກສາຄົ້ນຄວ້າ ໄດ້ສຶກສາ ແລະ ຄົ້ນຄວ້າເບິ່ງບົດວິໄຈຫຼາຍຮູບແບບ ເຫັນວ່າການຮຽນ-ການສອນໃນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ເປັນຮູບແບບທີ່ມີການຈັດກຸ່ມ, ມີການວາງໜ້າທີ່ຮັບຜິດຊອບລະອຽດ, ມີການເພິ່ງພາຊ່ວຍເຫຼືອກັນ, ມີການປັບປຸງຜົນງານ, ມີການໃຫ້ລາງວັນສຳລັບຜູ້ທີ່ເຮັດຜົນງານດີທີ່ສຸດ ແລະ ມີການຍ້ອງຍໍຊົມເຊີຍໃຫ້ລາງວັນ.

ຈາກເຫດຜົນດັ່ງກ່າວຜູ້ຄົ້ນຄວ້າຈຶ່ງສຶກສາການຮຽນຮ່ວມໂດຍໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ເຂົ້າໃນການຈັດການຮຽນ-ການສອນ ວິຊາພາສາລາວ ເພາະການຮຽນການສອນໃນຮູບແບບນີ້ແມ່ນເປັນຮູບແບບການຮຽນທີ່ໃຫ້ນັກຮຽນແຕ່ລະຄົນມີສ່ວນຮ່ວມ, ມີການແບ່ງກຸ່ມເໝາະສົມກັບສະພາບຕົວຈິງ, ມີການແບ່ງໜ້າວຽກລະອຽດ.

**2. ວັດຖຸປະສົງການວິໄຈ**

ວັດຖຸປະສົງຂອງການວິໄຈຄັ້ງນີ້ປະກອບມີ

1) ເພື່ອສຶກສາປະສິດທິພາບຂອງບົດສອນໂດຍໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ເຂົ້າໃນການສອນພາສາລາວ ຊັ້ນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ.

2) ເພື່ອຫາຄ່າດັດຊະນີຄວາມກ້າວໜ້າຂອງການຮຽນ ວິຊາ ພາສາລາວ ຂອງນັກຮຽນ ໂດຍນຳໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together).

3) ເພື່ອສຶກສາທັດສະນະຄະຕິ ຂອງນັກຮຽນພາຍຫຼັງໄດ້ຮັບການສອນ ໂດຍໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together).

**3. ວິທີການເກັບລວບລວມຂໍ້ມູນ**

**3.1 ແບບແຜນການວິໄຈ**

ແບບແຜນການວິໄຈຄັ້ງນີ້ແມ່ນການວິໄຈດ້ານການທົດລອງທີ່ກຸ່ມປະຊາກອນກຸ່ມດຽວທີ່ມີການທົດສອບກ່ອນ ແລະ ຫຼັງການທົດລອງ. ວິຊາພາສາລາວ ໂດຍການນຳໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ກັບນັກສຶກສາຊັ້ນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ ຈຳນວນ 5 ບົດ. ໃຊ້ເວລາເກັບກຳຂໍ້ມູນນຳກຸ່ມທົດລອງ 5 ອາທິດ, ອາທິດລະ 1 ຄັ້ງ, ຄັ້ງລະ 2 ຊົ່ວໂມງຕໍ່ 1 ບົດສອນ ລວມເປັນ 10 ຊົ່ວໂມງ (ລະຫວ່າງເດືອນຕຸລາ ເຖິງ ເດືອນພະຈິກ).

**3.2 ກຸ່ມຕົວຢ່າງ**

ກຸ່ມເປົ້າໝາຍທີ່ໃຊ້ໃນການທົດລອງສຶກສາຄົ້ນຄວ້າໃນຄັ້ງນີ້ ເປັນນັກຮຽນຊັ້ນປະຖົມປີທີ 5 ມີທັງໝົດ 1 ຫ້ອງຂອງໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ ຈຳນວນ 35 ຄົນ ທີ່ກຳລັງຮຽນໃນພາກຮຽນທີ 1 ສົກຮຽນ 2017-2018, ໄດ້ມາໂດຍການເລືອກແບບເຈາະຈົງ.

**3.3 ເຄື່ອງມືວິໄຈ**

ເຄື່ອງທີ່ໃຊ້ໃນການວິໄຈຄັ້ງນີ້ປະກອບດ້ວຍ:

- ບົດສອນທີ່ໃຊ້ວິທີການສອນການຽນຮູ້ແບບຮ່ວມກັນໃນການຮຽນການສອນພາສາລາວ ຮູບແບບ LT

- ບົດທົດສອບກ່ອນ-ຫຼັງ
- ບົດສອບຖາມທັດສະນະຄະຕິຫຼັງການສອນທີ່ໃຊ້ວິທີການສອນ ຮູບແບບ LT
- ແບບສັງເກດການສອນ

**3.4 ການເກັບກຳຂໍ້ມູນ**

ການເກັບກຳຂໍ້ມູນທີ່ໄດ້ຈາກແບບທົດສອບກ່ອນ-ຫຼັງ, ແບບສອບຖາມທັດສະນະຄະຕິຂອງຜູ້ຮຽນຫຼັງກາສອນທີ່ໃຊ້ວິທີການສອນຮູບແບບ LT, ແບບສັງເກດການສອນ.

**3.5 ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນຄັ້ງນີ້ປະກອບດ້ວຍ ຄ່າສະເລ່ຍ, ຄ່າຜັນປ່ຽນມາດຕາຖານ (S.D), ຄ່າປະສິດທິພາບຂອງບົດສອນ, ຄ່າປະສິດທິຜົນການຮຽນຂອງນັກຮຽນ, ຄ່າຄວາມທ່ຽງຕົງຕາມ, ຄ່າຄວາມຍາກງ່າຍ (P) ຂອງແບບທົດສອບ, ຄ່າຄວາມເຊື່ອໝັ້ນຂອງແບບທົດສອບ, ອັດຕາສ່ວນຮ້ອຍ, ຄ່າທົດສອບກ່ອນ ແລະຫຼັງ.

**4. ຜົນການວິເຄາະຂໍ້ມູນ**

**ຜົນການວິໄຈທີ 1:** ຜົນການວິເຄາະປະສິດທິພາບດ້ານຂະບວນການຮຽນ-ການສອນ.

| ນັກຮຽນ ຄົນທີ | ຜົນການຮຽນ | | | | | |
|---|---|---|---|---|---|---|
| | **ບົດທີ 1** | **ບົດທີ 2** | **ບົດທີ 3** | **ບົດທີ 4** | **ບົດທີ 5** | **ລວມ** |
| 1 | 26 | 27 | 26 | 27 | 25 | 131 |
| 2 | 28 | 27 | 27 | 27 | 24 | 133 |
| 3 | 26 | 27 | 26 | 24 | 27 | 130 |
| 4 | 27 | 28 | 28 | 29 | 27 | 139 |
| 5 | 28 | 27 | 27 | 28 | 26 | 136 |
| 6 | 25 | 27 | 26 | 27 | 28 | 133 |
| 7 | 27 | 25 | 27 | 25 | 25 | 129 |
| 8 | 27 | 25 | 27 | 27 | 26 | 132 |
| 9 | 25 | 28 | 27 | 27 | 26 | 133 |
| 10 | 27 | 28 | 27 | 28 | 27 | 137 |
| 11 | 25 | 27 | 26 | 27 | 24 | 129 |
| 12 | 26 | 25 | 29 | 28 | 27 | 135 |
| 13 | 25 | 24 | 24 | 25 | 30 | 128 |
| 14 | 27 | 26 | 26 | 27 | 28 | 134 |
| 15 | 27 | 25 | 28 | 26 | 28 | 134 |
| 16 | 28 | 27 | 27 | 24 | 28 | 134 |
| 17 | 25 | 23 | 28 | 28 | 27 | 131 |
| 18 | 27 | 26 | 26 | 27 | 27 | 133 |
| 19 | 26 | 27 | 26 | 26 | 24 | 129 |
| 20 | 27 | 27 | 28 | 27 | 26 | 135 |
| 21 | 26 | 27 | 26 | 26 | 27 | 132 |
| 22 | 26 | 25 | 28 | 28 | 28 | 135 |

| | | | | | | |
|---|---|---|---|---|---|---|
| 23 | 26 | 27 | 25 | 25 | 26 | 129 |
| 24 | 26 | 28 | 25 | 25 | 25 | 129 |
| 25 | 28 | 28 | 25 | 24 | 25 | 130 |
| 26 | 26 | 26 | 27 | 25 | 28 | 132 |
| 27 | 28 | 29 | 25 | 25 | 27 | 134 |
| 28 | 26 | 27 | 26 | 25 | 26 | 130 |
| 29 | 27 | 28 | 26 | 27 | 26 | 134 |
| 30 | 25 | 28 | 24 | 27 | 27 | 131 |
| 31 | 27 | 25 | 26 | 23 | 28 | 129 |
| 32 | 27 | 26 | 24 | 23 | 27 | 127 |
| 33 | 26 | 24 | 26 | 25 | 28 | 129 |
| 34 | 28 | 24 | 28 | 25 | 28 | 133 |
| 35 | 25 | 27 | 25 | 24 | 25 | 126 |
| **ລວມ** | **926** | **925** | **922** | **911** | **931** | **4615** |
| $\overline{X}$ | **26.45** | **26.42** | **26.34** | **26.02** | **26.60** | **26.37** |
| **SD** | **1.01** | **1.44** | **1.26** | **1.56** | **1.39** | **1.33** |
| **E1** | **85.86** | **86.28** | **87.28** | **88.00** | **87.29** | **87.90** |

$$E_1 = \frac{\frac{4615}{35}}{150} \times 100 = \frac{4615}{35 \times 150} \times 100 = 87.90$$

ພົບວ່ານັກຮຽນປະຖົມປີທີ 5 ໂຮງຮຽນປະຖົມສາທິດ ໄດ້ຄະແນນຈາກຂະບວນການ ($E_1$) ຈາກບົດສອນທີ 1, ບົດສອນທີ 2, ບົດສອນທີ 3, ບົດສອນທີ 4 ແລະ ບົດສອນທີ 5 ຂອງການຈັດກິດຈະກໍາການຮຽນ-ການສອນ ໂດຍການຈັດການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ມີຄ່າສະເລ່ຍເທົ່າກັບ 26.37 ຈາກຄະແນນເຕັມ 30 ແລະ ຄ່າ SD=1,33, E1=87.90

ປະສິດທິພາບຂອງຂະບວນການສອນ E1

| ບົດສອນ | ເນື້ອໃນ | ນັກຮຽນ | ຄະແນນລວມ | $\overline{X}$ | S.D | ເປີເຊັນ |
|---|---|---|---|---|---|---|
| 1 | ສະຕິລະວັງຕົວ | 35 | 926 | 26.45 | 1.01 | 85.86 |
| 2 | ຊ້າງກັບນົກໄສ່ | 35 | 925 | 26.42 | 1.44 | 86.28 |
| 3 | ສັດປ່າໃນປະເທດເຮົາ | 35 | 922 | 26.34 | 1.26 | 87.28 |
| 4 | ຄຸນປະໂຫຍດຂອງສັດ | 35 | 911 | 26.02 | 1.56 | 88.00 |
| 5 | ວັນຄູແຫ່ງຊາດ | 35 | 931 | 26.60 | 1.39 | 87.29 |
| $\Sigma_X$ | | **175** | **4615** | **26.37** | **6.66** | **434.71** |
| **$E_1$** | | | | | | **87.90** |

ໂດຍລວມແລ້ວສາມາດສະຫຼຸບ ໄດ້ວ່າປະສິດທິພາບຂອງຂະບວນການຮຽນ-ການສອນຂອງແຜນການສອນແບບທົດສອບຍ່ອຍ ວິຊາ ພາສາລາວ E1 ເທົ່າກັບ 87.90 ເຊິ່ງສູງກວ່າເກນທີ່ຕັ້ງໄວ້ຄື 80/80.

ປະສິດທິພາບຂອງຂະບວນການສອນ E2

| ນັກຮຽນຜູ້ທີ | ກ່ອນຮຽນ | ຫຼັງການຮຽນ |
|---|---|---|
| | **ຄະແນນເຕັມ 30** | **ຄະແນນເຕັມ 30** |
| 1 | 16 | 22 |
| 2 | 8 | 28 |
| 3 | 11 | 26 |
| 4 | 9 | 27 |
| 5 | 17 | 28 |
| 6 | 10 | 26 |
| 7 | 7 | 27 |
| 8 | 7 | 27 |
| 9 | 11 | 28 |
| 10 | 20 | 26 |
| 11 | 8 | 27 |
| 12 | 15 | 27 |
| 13 | 12 | 26 |
| 14 | 7 | 27 |
| 15 | 15 | 24 |
| 16 | 17 | 26 |
| 17 | 11 | 27 |
| 18 | 10 | 26 |
| 19 | 7 | 26 |
| 20 | 9 | 26 |
| 21 | 9 | 26 |
| 22 | 10 | 27 |
| 23 | 14 | 27 |
| 24 | 17 | 28 |
| 25 | 17 | 27 |
| 26 | 12 | 27 |
| 27 | 8 | 28 |
| 28 | 14 | 26 |
| 29 | 7 | 27 |
| 30 | 7 | 27 |
| 31 | 10 | 26 |
| 32 | 10 | 26 |

| | | |
|---|---|---|
| 33 | 14 | 29 |
| 34 | 10 | 30 |
| 35 | 10 | 26 |
| **ລວມ** | 396 | 934 |
| $\overline{X}$ | 11.31 | 26.69 |
| **SD** | 3.64 | 1.35 |
| **E2** | **37.71** | **88.95** |

ຜົນການຄົ້ນຄວ້າພົບວ່າ ປະສິດທິພາບຂອງຄະແນນການວັດປະເມີນຜົນຈາກການເຮັດບົດທົດສອບວັດຜົນສໍາເລັດທາງການຮຽນໂດຍລວມມີຄ່າສະເລ່ຍເທົ່າກັບ $\overline{X}$ =26.69 ຄ່າຜັນປ່ຽນມາດຕະຖານເທົ່າກັນ S.D =1.35 ແລະ E2 = 88.95. ເຊິ່ງສູງກວ່າເກນທີ່ຕັ້ງໄວ້ຄື 80/80.

**ຜົນການວິໄຈທີ 2:** ວິເຄາະຂໍ້ມູນປະສິດທິພາບຂອງຜົນການຈັດການຮຽນ-ການສອນ.

| ປະສິດທິພາບ | ຄະແນນລວມ | $\overline{X}$ | S.D | E1/E2 |
|---|---|---|---|---|
| ປະສິດທິພາບຂອງຂະບວນການຮຽນ (E1) | 4615 | 26.37 | 1.33 | 87.90/88.95 |
| ປະສິດທິພາບຂອງຜົນທ້າຍ (E2) | 934 | 26.69 | 1.35 | |
| ດັດສະນີປະສິດທິຜົນ ( EI ) | | 0.8226 | | 82.26 % |

ຜົນການຄົ້ນຄວ້າພົບວ່າຄ່າຄະແນນສະເລ່ຍຂອງຄະແນນວັດປະເມີນຜົນຈາກການເຮັດບົດທົດສອບຍ່ອຍຫຼັງການຈັດການຮຽນ - ການສອນຂອງທຸກໆບົດສອນເທົ່າກັບ $\overline{X}$ =26.37 ຄ່າຜັນປ່ຽນມາດຕະຖານ S.D = 1.33 ເຊິ່ງມີປະສິດທິພາບ (E1) ເທົ່າກັບ 87.90 ແລະ ຄ່າສະເລ່ຍຂອງຄະແນນວັດຜົນສໍາເລັດທາງການຮຽນເທົ່າກັບ 26.69 ຄ່າຜັນປ່ຽນມາດຕະຖານເທົ່າກັບ S.D = 1.35 ເຊິ່ງມີປະສິດທິພາບ (E2) ເທົ່າກັບ 88.95 ແລະ ດັດສະນີ້ປະສິດທິຜົນເທົ່າ 0.8226 ຫຼື 82.26 %

**ຜົນການວິໄຈທີ 3** : ຜົນການວິເຄາະດ້ານທັດສະນະຄະຕິ

| ລ/ດ | ເນື້ອໃນ | ເຫັນດີ | | ບໍ່ເຫັນດີ | |
|---|---|---|---|---|---|
| | | ຈໍານວນ | ຄິດເປັນເປີເຊັນ | ຈໍານວນ | ຄິດເປັນເປີເຊັນ |
| 1 | ດ້ານເນື້ອໃນ | 164 | 93.71 | 11 | 6.29 |
| 2 | ດ້ານກິດຈະກໍາການຮຽນ-ການສອນ | 159 | 90.86 | 16 | 9.14 |
| 3 | ດ້ານສື່ການຮຽນ-ການສອນ | 168 | 96.00 | 7 | 4.00 |
| 4 | ດ້ານການວັດ ແລະ ປະເມີນຜົນ | 172 | 98.29 | 3 | 1.71 |
| | **ລວມ** | **663** | **94.72** | **37** | **5.28** |

ສະຫຼຸບແລ້ວ ທັດສະນະຄະຕິຂອງນັກຮຽນຕໍ່ການຈັດການຮຽນ-ການສອນໂດຍໃຊ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ມີຈໍານວນນັກຮຽນເຫັນດີຄິດເປັນເປີເຊັນເທົ່າກັບ 94.72% ເມື່ອລຽນແຕ່ລະຫົວຂໍ້ຄະແນນພົບວ່າ ດ້ານທີ່ມີເປີເຊັນສູງສຸດທີ 1 ແມ່ນດ້ານການວັດ ແລະ ປະເມີນຜົນ ມີຈໍານວນນັກຮຽນເຫັນດີເທົ່າກັບ

172 ຄິດເປັນເປີເຊັນ 98.29%; ດ້ານທີ່ມີຄະແນນສູງສຸດທີ 2 ດ້ານສື່ການຮຽນ-ການສອນ ມີຈຳນວນນັກຮຽນເຫັນດີເທົ່າກັບ 168 ຄິດເປັນເປີເຊັນ 96.00%; ດ້ານທີ່ມີຄະແນນສູງສຸດທີ 3 ດ້ານເນື້ອມີຈຳນວນນັກຮຽນເຫັນດີເທົ່າກັບ 164 ຄິດເປັນເປີເຊັນ 93.71% ແລະ ດ້ານທີ່ມີຄະແນນສູງສຸດທີ 4 ດ້ານກິດຈະກຳການຮຽນ-ການສອນ ມີຈຳນວນນັກຮຽນເຫັນດີເທົ່າກັບ159 ຄິດເປັນເປີເຊັນ 90.86%.

**5. ອະພິປາຍຜົນ**

ຈາກການສຶກສາຄົ້ນຄວ້າ ການການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together). ວິຊາ ພາສາລາວ ຊັ້ນປະຖົມ ປີທີ 5 ໂຮງຮຽນປະຖົມສາທິດ ອະພິປາຍຜົນໄດ້ດັ່ງນີ້:

ຜົນການຫາປະສິດທິພາບຂອງບົດສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together).ວິຊາ ພາສາລາວ ຊັ້ນປະຖົມ ປີທີ 5 ມີປະສິດທິພາບເທົ່າກັບ 87.90 (E1). ຜົນການຮຽນບົດທີ 1 ເລື່ອງ ສະຕິລະວັງຕົວ ມີຄະແນນສະເລ່ຍເທົ່າກັບ 26.45 ຈາກຄະແນນເຕັມ 30 ຄ່າ SD=1.01, ຄິດເປັນເປີເຊັນ 85.86%; ບົດທີ 2 ເລື່ອງ ຊ້າງກັບນົກໄສ່ ມີຄະແນນສະເລ່ຍເທົ່າກັບ 26.42 ຈາກຄະແນນເຕັມ 30 ຄ່າ SD=1.44, ຄິດເປັນເປີເຊັນ 86.28%; ບົດທີ 3 ເລື່ອງ ສັດປ່າໃນປະເທດເຮົາ ມີຄະແນນສະເລ່ຍເທົ່າກັບ 26.34 ຈາກຄະແນນເຕັມ 30 ຄ່າ SD=1.26, ຄິດເປັນເປີເຊັນ 87.28%; ບົດທີ 4 ເລື່ອງ ຄຸນປະໂຫຍດຂອງສັດ ມີຄະແນນສະເລ່ຍເທົ່າກັບ 26.02 ຈາກຄະແນນເຕັມ 30 ຄ່າ SD=1.56, ຄິດເປັນເປີເຊັນ 88.00%; ເລື່ອງທີ 5 ເລື່ອງ ວັນຄູແຫ່ງຊາດມີຄະແນນສະເລ່ຍເທົ່າກັບ 26.60 ຈາກຄະແນນເຕັມ 30 ຄ່າ SD=1.39, ຄິດເປັນເປີເຊັນ 88.29 ເຊິ່ງສູງກວ່າເກນທີ່ກຳນົດໄວ້ 80/80. ອາດເປັນຍ້ອນຜູ້ຄົ້ນຄວ້າໄດ້ມີການກະກຽມອຸປະກອນການສອນ, ສຶກສາຂັ້ນຕອນການສອນ, ວາງແຜນ, ຈັດສັນເປັນລະບົບຂັ້ນຕອນຢ່າງລະອຽດສະນັ້ນຈິ່ງເຮັດໃຫ້ການຈັດການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ນີ້ໄດ້ຮັບຜົນສຳເລັດທາງການຮຽນທີ່ສູງກວ່າເກນທີ່ຕັ້ງໄວ້.

ຜົນການຫາປະສິດທິພາບຂອງຜົນການຈັດການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together). ວິຊາ ພາສາລາວ ມີປະສິດທິພາບເທົ່າກັບ 88.95 (E2) ເຊິ່ງສູງກວ່າເກນທີ່ຕັ້ງໄວ້.

ເມື່ອເຫັນວ່າເໝາະສົມແລ້ວ ຈິ່ງນຳເອົາເຄື່ອງມືໄປທົດລອງເພື່ອຫາຄຸນນະພາບຂອງເຄື່ອງມືກ່ອນທີ່ຈະນຳໄປທົດລອງໃຊ້ຈິງກັບກຸ່ມເປົ້າໝາຍຈິ່ງໄດ້ປະສິດທິພາບຕາມເກນທີ່ຕັ້ງໄວ້ ມີຄ່າຄວາມເຊື່ອໝັ້ນຂອງແບບທົດສອບ ເທົ່າກັບ 0.873 ເຊິ່ງເປັນການສ້າງການຮຽນຮູ້ໃຫ້ແກ່ຜູ້ຮຽນເປັນຢ່າງດີ, ເຮັດໃຫ້ຜູ້ຮຽນເກີດຄວາມເຂົ້າໃຈໃນການຮຽນຫຼາຍຂຶ້ນກ່ວາການສອນແບບປົກກະຕິ ເຊິ່ງຈະເປັນການກະຕຸ້ນຄວາມຢາກຮູ້ຢາກເຫັນໃນສິ່ງທີ່ຜູ້ຮຽນສົນໃຈຢ່າງແທ້ຈິງ.

ການສຶກສາທັດສະນະຄະຕິຂອງຜູ້ຮຽນທີ່ມີຕໍ່ການຈັດການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ວິຊາ ພາສາລາວ ຂອງນັກຮຽນຊັ້ນ ປີທີ 5 ໂຮງຮຽນປະຖົມສາທິດ ວິທະຍາໄລຄູສະຫວັນນະເຂດ ໂດຍລວມແລ້ວທັດສະນະຄະຕິ ຄິດເປັນເປີເຊັນເທົ່າກັບ 94.72% ຢູ່ໃນລະດັບເຫັນດີ. ຖ້າພິຈາລະນາໃນແຕ່ລະດ້ານເຫັນວ່າ ດ້ານເນື້ອໃນ ຄິດເປັນເປີເຊັນ 93.71%; ດ້ານກິດຈະກຳການຮຽນ-ການສອນ ຄິດເປັນເປີເຊັນ 90.86%; ດ້ານສື່ການຮຽນ-ການສອນ ຄິດເປັນເປີເຊັນ 96.00% ແລະ ດ້ານການວັດ ແລະ ປະເມີນຜົນ ຄິດເປັນເປີເຊັນ 98.29% ເຊິ່ງການຈັດການຮຽນຮູ້ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ເປັນວິທີການຈັດການຮຽນຮູ້ທີ່ຊ່ວຍໃຫ້ນັກຮຽນຄິດໂດຍຜ່ານການສົນທະນາແລກປ່ຽນຄວາມຄິດເຫັນໄດ້ດີຂຶ້ນ ແລະ ເປັນການສ້າງປະຕິສຳພັນລະຫວ່າງຄູກັບນັກຮຽນ, ນັກຮຽນດ້ວຍກັນ ເປັນການກະຕຸ້ນຄວາມຮູ້ ແລະ ປະສົບການເດີມຂອງນັກຮຽນອີກດ້ວຍເຊິ່ງສອດຄ່ອງກັບບົດຄົ້ນຄວ້າຂອງ ບົວພັນ ຄະເນການອກໄດ້ກ່າວວ່ານັກຮຽນມີທັດສະນະຄະຕິເຫັນດີຫຼາຍທີ່ສຸດຕໍ່ການຮຽນຮູບແບບ

ການຮຽນຮູ້ຮ່ວມກັນ (Learning Together) ນີ້ເຊິ່ງມີຜົນທັດສະນະຄະຕິຄິດເປັນເປີເຊັນ 94.72% ຢູ່ໃນລະດັບເຫັນດີ.

## 6. ສະຫຼຸບຜົນການວິໄຈ

ການສຶກສາຄົ້ນຄວ້າຄັ້ງນີ້ ເປັນການຈັດການຮຽນ-ການສອນ ວິຊາ ພາສາລາວ ຊັ້ນປະຖົມ ປີທີ 5 ໂຮງ ຮຽນປະຖົມສາທິດ ໂດຍການຈັດການຮຽນ-ການຮູບແບບການຮຽນຮູ້ຮ່ວມກັນ (Learning Together). ສະແດງໃຫ້ເຫັນຜົນດັ່ງນີ້:

- ປະສິດທິພາບຂອງບົດສອນ (ຂະບວນການຮຽນ) ຮູບແບບການຮຽນຮູ້ຮ່ວມກັນ (Learning Together). ວິຊາພາສາລາວ ມີຄ່າເທົ່າກັບ 87.90/88.95 ເຊິ່ງມີປະສິດທິພາບສູງກວ່າເກນທີ່ກຳນົດໄວ້.
- ຄ່າດັດສະນີປະສິດທິຜົນຂອງຜົນການຮຽນ-ການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together). ວິຊາ ພາສາລາວ ຊັ້ນປະຖົມ ປີທີ 5 ໂຮງຮຽນປະຖົມສາທິດ ມີປະສິດທິພາບຂອງການຮຽນເພີ່ມຂຶ້ນເທົ່າ 0.8226 ຫຼື 82.26 % ສະແດງວ່ານັກຮຽນ ມີພັດທະນາການຮຽນຮູ້ເພີ່ມຂຶ້ນ 82.26.
- ນັກສຶກສາມີທັດສະນະຄະຕິຕໍ່ການຈັດການຮຽນ-ການ ໂດຍຮູບແບບການຮຽນຮູ້ຮ່ວມກັນ (Learning Together). ຄິດເປັນເປີເຊັນເທົ່າກັບ 94.72% ຢູ່ໃນລະດັບເຫັນດີ.

## 7. ຂໍ້ສະເໜີແນະນຳ

### 7.1 ຂໍ້ສະເໜີແນະໃນການນຳຜົນການວິໄຈໄປໃຊ້

- ຈາກການສຶກສາຄົ້ນຄ້ວາເຫັນວ່າວິທີການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ແມ່ນມີປະສິດທິພາບສູງ, ສະນັ້ນ, ຄູອາຈານຄວນນຳໄປໃຊ້ໃນການຮຽນການສອນວິຊາ ພາສາລາວ ແລະ ວິຊາອື່ນໆທີ່ກ່ຽວຂ້ອງເພາະວ່າການສອນຈະໄດ້ຮັບປະສິດທິຜົນສູງຂຶ້ນກວ່າການສອນແບບປົກກະຕິ.
- ຂໍ້ສະເໜີຕໍ່ຜູ້ບໍລິຫານການສຶກສາ ຫຼື ຜູ້ເຮັດໜ້າທີ່ວິຊາສະເພາະຄວນນຳເອົາວິທີການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ໄປໃຊ້ໃນການສອນວິຊາອື່ນໆໃນໂຮງຮຽນ.

### 7.2 ຂໍ້ສະເໜີແນະໃນການວິໄຈໃນຄັ້ງຕໍ່ໄປ

- ຄວນເຮັດການຄົ້ນຄວ້າເພື່ອປຽບທຽບການສອນແບບຮ່ວມມື ຮູບແບບການຮຽນຮູ້ຮ່ວມກັນ (Learning Together) ກັບການສອນແບບຮ່ວມມືເທັກນິກອື່ນໆເຊັ່ນ: ແບບ Jigsaw , STAD… ແລະ ເຮັດຄົ້ນຄວ້າປຽບທຽບການສອນຮູບແບບການຮຽນຮູ້ຮ່ວມກັນ (Learning Together) ກັບການສອນແບບເກົ່າທີ່ເຄີຍໃຊ້
- ຄວນສຶກສາການໃຊ້ການສອນດ້ວຍວິທີການຮຽນແບບຮ່ວມມືຮູບແບບການຮຽນຮູ້ຮ່ວມກັນ (Learning Together) ໃນວິຊາພາສາລາວ ແຕ່ລົງເລິກດ້ານທັກສະ, ໄວຍະກອນ, ດ້ານການແຕ່ງ …

## ເອກະສານອ້າງອີງ

ກະຊວງສຶກສາທິການ. (2009). ຂອບເຂດພັດທະນາຂະແໜງການສຶກສາ 2009-*2015.* ນະຄອນຫຼວງວຽງຈັນ: ກະຊວງສຶກສາທິການ.

ກະຊວງສຶກສາທິການ ແລະ ກິລາ. (2013). *3* ລັກສະນະ 5 ຫຼັກມູນການສຶກສາຂອງລາວ. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2016). ກົດໝາຍວ່າດ້ວຍການສຶກສາ. ນະຄອນຫຼວງວຽງຈັນ: ບໍລິສັດ ວິສາຫະກິດໂຮງພິມສຶກສາ.

ກະຊວງສຶກສາທິການ ແລະ ກິລາ. (2015). ການແບ່ງຄວາມຮັບຜິດຊອບ ແລະ ປະສານງານກ່ຽວກັບໂຮງຮຽນເຝິກປະສົບການ ແລະ ໂຮງຮຽນສາທິດ. ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ. (2015). ວິໄສທັດຮອດປີ 2030 ຍຸດທະສາດຮອດປີ 2025 ແລະ ແຜນການພັດທະນາຂະແໜງການສຶກສາ ແລະ ກິລາ 5 ປີ ຄັ້ງທີ VIII ( 2016-2020 ). ນະຄອນຫຼວງວຽງຈັນ.

ກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງ ແລະ ພະນັກງານ. (2008). ກົດໝາຍວ່າດ້ວຍການສຶກສາແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ*.* ນະຄອນຫຼວງວຽງຈັນ: ໂຄງການສະໜັບສະໜູນການສຶກສາຂັ້ນພື້ນຖານ

ກະຊວງສຶກສາທິການ ແລະ ກິລາ, ກົມຈັດຕັ້ງພັກ-ພະນັກງານ. (2016). *ກົດມາຍວ່າດ້ວຍການສຶກສາ.* ນະຄອນຫຼວງວຽງຈັນ: ບໍລິສັດລັດວິສາຫະກິດໂຮງພິມສຶກສາ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2010). ຫຼັກສູດຊັ້ນປະຖົມສຶກສາ. ນະຄອນຫຼວງວຽງຈັນ.

ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ. (2010). ຫຼັກສູດຊັ້ນປະຖົມສຶກສາ. ນະຄອນຫຼວງວຽງຈັນ.

ສະພາແຫ່ງຊາດ. (2016). ເອກະສານກອງປະຊຸມໃຫຍ່ຄັ້ງທີ X ພັກປະຊາຊົນປະຕິວັກລາວ. ນະຄອນຫຼວງວຽງຈັນ: ສະພາແຫ່ງຊາດ.

ສະລັນ ຮົ່ມນະຮົງ. (2553). ສຶກສາປັດໄຈທີ່ສົ່ງຜົນຕໍ່ທັດສະນະຄະຕິຕໍ່ການຮຽນວິຊາພົນລະເມືອງສຶກສາ. ກຸງເທບ: ມະຫາວິທະຍາໄລສີນະຄະຣິນວິໂຣດ.

ສະຫງ່າ ແກ້ວບຸນມີ. (2016). ການນຳໃຊ້ຮູບແບບ Learning Together (LT) *ເຂົ້າໃນການຮຽນ-ການສອນ ວິຊາ* ການເມືອງເລື່ອງ ເສດຖະສາດການເມືອງ ສຳລັບນັກສຶກສາສາຍຄູປະຖົມ ລະບົບ 12+4 ປີ 3 ວິທະຍາໄລຄູດົງຄຳຊ້າງ *.* ນະຄອນຫຼວງວຽງຈັນ: ສຶກສາສາດ.

ສິລິປີຍະວັດ ສິລິໂນນຮັງ. (2554). ການພັດທະນາກິດຈະກຳການຮຽນຮູ້ ໂດຍການຮຽນຮູ້ແບບຮ່ວມມື (Learning Together : LT) ກຸ່ມສາລະການຮຽນຮູ້ສັງຄົມສຶກສາ ສາສະໜາ ແລະ ວັດທະນະທຳ ຊັ້ນປະຖົມປີທີ 4 ໂຮງຮຽນສະໜາມບິນ ຈັງຫວັດຂອນແກ່ນ. ຂອນແກ່ນ: ມະຫາວິທະຍາໄລຂອນແກ່ນ.

ສຸຈິດຕາ ຈັນທະລອຍ. (2554). ທິດສະດີການຮຽນຮູ້ຕາມແນວຄິດຂອງບູມ. Retrieved July.

ສຸຣາງ ໂຄຕຣະກຸນ. (2552). ຈິດຕະສາດການສຶກສາ. ມະຫາວິທະຍາໄລຈຸລາລົງກອນ.

ສຸວິດ ມູນຄຳ, ອໍລະໄທ ມູນຄຳ. (2545). 19 ວິທີຈັດການຮຽນຮູ້ເພື່ອພັດທະນາຄວາຮູ້ ແລະ ທັກສະ (ລະດັບສຽງ. 7). ກຸງເທບ: ຮ້ານຮຸ້ນສ່ວນຈຳກັດພາບພິມ.

ສົມສີ ຢ່າງຕັ່ງມົວ. (2016). ການຈັດການຮຽນ-ການສອນ ວິຊາ ສຶກສາພົນລະເມືອງ ໂດຍນຳໃຊ້ຮູບແບບຮຽນຮູ້ຮ່ວມກັນ (LT) ຂັ້ນ ມ. 5 ທີ່ໂຮງຮຽນ ມ.ສ ວຽງໄຊ ເມືອງ ວຽງໄຊ ແຂວງ ຫົວພັນ. ນະຄອນຫຼວງວຽງຈັນ: ສຶກສາສາດ.

ສົມພອນ ວິໄລສົມ, ເກດ ພັນລັກ ພ້ອມຄະນະ. (2010). *ຄູ່ມືການເຝິກອົບຮົມການຳໃຊ້ແບບຮຽນ ແລະ ຄູ່ມືສຳລັບຊັ້ນມັດທະຍົມສຶກສາຕອນຕົ້ນ*. ນະຄອນຫຼວງວຽງຈັນ.

ຖະໜອມຈິດ ມະໂນສານ. (2015). ການຈັດການຮຽນ-ການສອນ ວິຊາປະຊາກອນ ແລະ ສິ່ງແວດລ້ອມ ໂດຍການສອນແບບຮ່ວມກັນ ສຳລັບນັກສຶກສາປີທີ 1 ລະບົບ 12+4 ສາຍຄູວິທະຍາສາດທະມະຊາດ ທີ່ວິທະຍາໄລຄູຫຼວງພະບາງ [ວິທະຍານິພົນ]. ນະຄອນຫຼວງວຽງຈັນ: ຄະນະສຶກສາສາດ,ມະຫາວິທະຍາໄລແຫ່ງຊາດ.

ທິດສະໜາ ແຂມມະນີ. (2552). ສາດການສອນ. ກຸງເທບ: ຈຸລາລົງກອນມະຫາວິທະຍາໄວ.

ນາຍົກລັດຖະມົນຕີແຫ່ງ ສປປລ. (ກໍລະກົດ 2008). ແຜນຍຸດທະສາດການປະຕິຮູບລະບົບການສຶກສາແຫ່ງຊາດ 2006-2015. ນະຄອນຫຼວງວຽງຈັນ: ໂຮງພິມສີສະຫວາດ.

ບຸນຊົມ ສີສະອາດ. (2546). ການວິໄຈສຳລັບຄູ. ກຸງເທບ: ສຸວິລິຍະສານ ຈັດພິມ.

ບຸນບຽງ ທຸມທອງ. (2554). ການພັດທະນາຫຼັກສູດ. ກຸງເທບ: ສຳນັກພິມແຫ່ງຈຸລາລົງກອນມະຫາວິທະຍາໄລ.

ບົວຜັນ ຄະເນນອກ. (2553). ການຈັດກິດຈະກຳການຮຽນຮູ້ດ້ວຍກຸ່ມຮ່ວມມືເທັກນິກ LT ເລື່ອງວັດສະດຸ ແລະສົມບັດຂອງວັດສະດຸກຸ່ມສາລະການຮຽນຮູ້ວິທະຍາສາດຊັ້ນປະຖົມປີທີ 5 [ບົດຄັດຫຍໍ້] ມະຫາວິທະຍາໄລມະຫາສາລະຄາມ. [ບົດຄັດຫຍໍ້] ມະຫາວິທະຍາໄລມະຫາສາລະຄາມ.

ປຣາສາດ ເນືອງສະເຫຼີມ. (2556). ວິໄຈການສອນ. ກຸງເທບ: ບໍລິສັດວິປິນ 1991 ຈຳກັດ.

ປິ່ງຄຳ ສີສຸວັນ. (2009). ແບບຮຽນພາສາລາວ ຊັ້ນປະຖົມ 5 (ລະດັບສຽງ. 1). ລາວ, ນະຄອນຫຼວງວຽງຈັນ, ປະເທດລາວ: ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ປິ່ງຄຳ ສີສູວັນ, ແຫວນເພັດ ສີສຸລາດ, ບຸນອ້ຽງ ຈຸລາມະນີ ພ້ອມຄະນະ. (2009). ຄູ່ມືພາສາລາວ ຊັ້ນປະຖົມປີທີ 5. ນະຄອນຫຼວງວຽງຈັນ: Pitambra Books Pvt.Ltd..,.

ປິຍະພອນ ວົງອານຸດຕະໂລດ. (2535). ການຈັດ ແລະ ບໍລິຫານອະຊີວະສຶກສາສູນສິ່ງເສີມກຸງເທບ. ກຸງເທບ.

ປິລັນທະນາ ໂຕ໊ະສິງ. (2553). ຜົນການຈັດການຮຽນການສອນພາສາໄທ ຊັ້ນປະຖົມປີທີ 5 ເລື່ອງ ຄຳຄວບ ຮ ລ ວ ໂດຍການຈັດການຮຽນຮູ້ແບບຮ່ວມມື. [ບົດຄັດຫຍໍ້] ມະຫາວິທະຍາໄລມະຫາສາລະຄາມ.

ພິຣຸນໂປຣຍ ສຳໂລງທອງ. (2554). ສຶກສາຜົນສຳເລັດທາງການຮຽນ ແລະ ທັດສະນະຄະຕິຕໍ່ການຮຽນພາສາໄທຂອງນັກຮຽນຊັ້ນມັດທະຍົມປີທີ 5. ກຸງເທບ: ມະຫາວິທະຍາໄລສີນະຄຣິນວິໂລດ.

ພົມມີ ວັນນະສີ ພ້ອມຄະນະ. (2009). ວິທີສອນວັນນະຄະດີລາວ 1. ນະຄອນຫຼວງວຽງຈັນ.

ມະຫາວິທະຍາໄລລາຊະພັດຈຸລາລົງກອນ. (2553). ຄູ່ມືການຈັດລະບົບການຮຽນຮູ້ ທີ່ຢຶດຖືຜູ້ຮຽນເປັນສູນກາງການຮຽນຮູ້. ກຸງເທບ.

ລັດຕະໄຊ ກອງສອນ. (2557). ການພັດທະນາຜົນສຳເລັດທາງດ້ານການຮຽນວິຊາຄະນິດສາດ ເລື່ອງ ພະຫຸນາມ ໂດຍວິທີການຈັດການຮຽນຮູ້ແບບຮ່ວມມືເທັກນິກ LT ຂອງນັກຮຽນຊັ້ນມັດທະຍົມສຶກສາປີທີ 1ໂຮງຮຽນນະວະມິນທາຊິນຸທິດບະດິນອະເດຊາ.

ອະນຸລັກ ແກ້ວຄູນ. (2555). ຜົນການຈັດກິດຈະກຳການຮຽນຮູ້ກຸ່ມຮ່ວມມືແບບຮຽນຮ່ວມກັນ(LT) ເລື່ອງ ຟັງຊັ້ນກວດສອບເງື່ອນໄຂ ແລະ ຟັງຊັ້ນຮອບການເຮັດວຽກກຸ່ມສາລະການຮຽນຮູ້ການງານອາຊີບ ແລະ ເທັກໂນໂລຢີຊັ້ນມັດທະຍົມສຶກສາປີທີ 5. ສາລະຄາມ: ມະຫາວິທະຍາໄລສາລະຄາມ.

ອາພອນ ທ່ຽງໃຈ. (2550). ຫຼັກການສອນ. ກຸງເທບ: ສຳນັກພິມໂອດຽນສະໂຕ.

ອາຣິດສະຍາ ທັບທິມທອງ. (2551). ທັດສະນະຄະຕິຂອງນັກທ່ອງທ່ຽວຕໍ່ສະຖານທີ່ທ່ອງທ່ຽວເຊີງອະນຸລັກ. ຊົນບູລີ: ມະຫາວິທະຍາໄລບູລະພາ.

ອາລະຍາ ປັນຈະນາວັດ. (2556). ການພັດທະນາການຮຽນຮູ້ເພື່ອເສີມສ້າງທັກສະການທຳງານເປັນທີມ. ມະຫາວິທະຍາໄລກະເສດສາດ ວິທະຍາເຂດບາງເຂນ.

ອາລະຍາ ປັນຈະມາວັດ. (2556). ການພັດທະນາກິດຈະກຳການຮຽນຮູ້ເພື່ອເສີມສ້າງທັກສະການເຮັດວຽກເປັນກຸ່ມໂດຍໃຊ້ການຈັດການຮຽນຮູ້ແບບຮ່ວມມືຕາມແບບ LT (Learning Together) ສຳລັບນັກຮຽນຊັ້ນມັດທະຍົມປີທີ 1 ໂຮງຮຽນດອນເມືອງທະຫານອາກາດບຳລຸງ ໃນລາຍວິຊາອາຊີບ ແລະ ເທັກໂນໂລຊີ. ບົດຄັດຫຍໍ້.

ອຸສາ ຄົງທອງ ພ້ອມຄະນະ. (2553). *ຄູ່ມືການຈັດລະບົບການຮຽນການສອນທີ່ຍຶດຜູ້ຮຽນເປັນສູນກາງການຮຽນຮູ້*. ກຸງເທບ: ທຽນນະວັດທະນາ ພິງຕິ້ງ.